ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ເລກທີ: 1070 /ສ.ອ.ນ

ນະຄອນຫຼວງວຽງຈັນ,ວັນທີ 2 ພະຈິກ 2023

ມະຕິ

ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຄັ້ງທີ 04 ປະຈຳປີ 2023, ວັນທີ 02 ພະຈິກ 2023

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 04/2023 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 02 ພະຈິກ 2023 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ ທ່ານ ສົມຈິດ ອິນທະມິດ ປະທານສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ(ຄັ້ງທີ 03/2023).
2. **ມະຕິ:** ເຫັນດີນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳ ໄຕ໋ມາດ 3 ປີ 2023 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳ ໄຕມາດ 3 ປີ 2023.
3. **ມະຕິ:** ເຫັນດີນຳແຜນຈັດກອງປະຊຸມສະພາບໍລິຫານຂອງບໍລິສັດປະຈຳປີ 2024.
4. **ມະຕິ:** ເຫັນດີແຕ່ງຕັ້ງ **ທ່ານ ສອນສະຫວັນ ແສງອະໄພ** ເປັນປະທານຄະນະກຳມະການກຳນົດຄ່າຕອບແທນ ແທນຄົນເກົ່າທີ່ລາອອກໄປ.

ກອງປະຊຸມໄດ້ປິດລົງເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ກະຊວງ ອຸດສາຫະກຳ ແລະ ການຄ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY ນະຄອນ ຫຼວງ ວຽງຈັນ

ທ່ານ ສົມຈິດ ອິນທະມິດ